ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 1408 /ທຄຕລ 2022
ນະຄອນຫຼວງວຽງຈັນ, ວັນທີ: 07 JUL 2022

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ແລະ ລະບົບເຄື່ອງສຽງ.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຄື່ອງໄອທີ ແລະ ອຸປະກອນລະບົບເຄື່ອງສຽງ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ແລະ ອຸປະກອນລະບົບເຄື່ອງສຽງ Conference ຊາບວ່າ ທຄຕລ ມີຄວາມຕ້ອງການ ອຸປະກອນລະບົບເຄື່ອງສຽງ Conference ແລະ ອຸປະກອນ IdeaHub 86" ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

**1. ອຸປະກອນເຄື່ອງສຽງຫ້ອງປະຊຸມ.**

| ລ/ດ | ລະຫັດ | ລາຍລະອຽດ | ຍີ່ຫໍ້ | ຈຳນວນ | ຫົວໜ່ວຍ | ໝາຍເຫດ |
|---|---|---|---|---|---|---|
| **1. Conference System** | | | | | | |
| 1.1 | TS-W100 | WIFI wireless conference system controller | ITC | 1 | PCS | |
| 1.2 | TS-W101 | WIFI wireless conference chairman unit, with 4.3inch touch screen | ITC | 2 | PCS | |
| 1.3 | TS-W101A | WIFI wireless conference delegate unit, with 4.3inch touch screen | ITC | 10 | PCS | |
| 1.4 | TS-W111 | AP transmitter | ITC | 1 | PCS | |
| 1.5 | TS-W180 | Power charger, with 10 USB charger interfaces | ITC | 2 | PCS | |
| 1.6 | TL-SF1009PE | TPLINK 10/100Mbps switch | ITC | 1 | PCS | |
| 1.7 | TS-9100N | Network Central Controller, it is fully compatible with Laptop PC Windows, iOS (iPad/iPhone) and Android handheld devices (tablet 10-inch up). | ITC | 1 | PCS | |
| 1.8 | SIP-T48U | Yealink T48U IP Phone | Yealink | 2 | PCS | |
| **2. Sound System** | | | | | | |
| 2.1 | TS-354UH | 1 Receiver + 4 Hand-held Wireless Microphone | ITC | 1 | PCS | |
| 2.2 | TS-14PFX-4 | 12 Channel mixer | ITC | 1 | PCS | |
| 2.3 | TS-224 | Stereo Feeback Suppressor | ITC | 1 | PCS | |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | | | | | |
|---|---|---|---|---|---|---|
| 2.4 | TS-P440 | 4 Input and 4 Output Digital Audio Matrix Processor | ITC | 1 | PCS | |
| 2.5 | TS-200PI | Professional Stereo Amplifier, 2×200W@8Ω, 2×300W@4Ω, 600W@Bridge 8Ω | ITC | 2 | PCS | |
| 2.6 | TS-608A | High-End Entertainment Loudspeaker, 8'', 150W @8Ω | ITC | 2 | PCS | |
| 2.7 | TS-02B | Wall mount bracket | ITC | 2 | PCS | |
| 2.8 | T-G1.8 | XLR(Female)-XLR(Male) audio cable | ITC | 10 | PCS | |
| 2.9 | T-C3 | RCA - 6.35 single plug audio cable | ITC | 1 | PCS | |
| 2.10 | T-F3 | 6.35 single plug - male caron head audio cable | ITC | 1 | PCS | |
| 2.11 | T-6027B | 27U Cabinet | ITC | 1 | PCS | |

## 2. ອຸປະກອນ IdeaHub 86”

| ລ/ດ | ລະຫັດ | ລາຍລະອຽດ | ຍີ່ຫໍ້ | ຈຳນວນ | ຫົວໜ່ວຍ | ໝາຍເຫດ |
|---|---|---|---|---|---|---|
| **1. Conference & Camera** | | | | | | |
| 1.1 | IdeaHub Pro 86 | HUAWEI IdeaHub Pro 86-inch | Huawei | 1 | SET | |
| 1.2 | TV-620USB | HD Video Conference Camera (1080P)( 20x, 1080P Full HD, | ITC | 1 | PCS | |
| **2. OTHER SERVICE and ACCESSORIES** | | | | | | |
| 2.1 | Other accessories & Materials Connection with Conference System and Sound System | | | 1 | SET | |
| 2.2 | TECHNICAL SUPPORT SERVICE (Including Solution Design, Installation service fee, Implementation and Training ) | | | 1 | SET | |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ແລະ ລະບົບເຄື່ອງສຽງ ມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**
- **<u>ເອກະສານ ຊອງທີ1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ).
2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ບໍລິສັດຜູ້ສະໜອງຕ້ອງມີວິຊາການຜູ້ຊ່ຽວຊານໃນການຕິດຕັ້ງລະບົບດັ່ງກ່າວ, ຖ້າມີຜົນງານ ແລະ ປະສົບການໃນການສະໜອງໃຫ້ແກ່ພາກສ່ວນອື່ນມາແລ້ວໃຫ້ແນບຜົນງານດັ່ງກ່າວມາພ້ອມ.
4. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 15/07/2022 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la

- **<u>ເອກະສານ ຊອງທີ2:</u> (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 21/08/2022)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນພະຫັດ **ວັນທີ 21/07/2022 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.

**ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

**❖ ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.

**ການຊຳລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ 1:** ຊຳລະ 90% ຂອງມູນຄ່າ ພາຍໃນ 25 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງ, ຕິດຕັ້ງສຳເລັດ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ.
- **ງວດທີ 2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ຄຳພຸດ ສິດທິລາດ

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………./ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ປະເທດ....... | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: